ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

1880

ກະຊວງ ອຸດສາຫະກຳ ແລະ ການຄ້າ ເລກທີ /ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ 05 SEP 2012

# ຂໍ້ຕົກລົງ
## ວ່າດ້ວຍການມອບສິດໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດ
## (Preferential Certificates of Origin)

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະການຄ້າ ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍແຫລ່ງກຳເນີດສິນຄ້ານຳເຂົ້າ ແລະສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010.
- ອີງຕາມການສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ.

## ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າອອກຂໍ້ຕົກລົງ:

**ມາດຕາ 1:** ມອບສິດໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ນະຄອນຫລວງວຽງຈັນ ເປັນຜູ້ອອກ ແລະ ຄຸ້ມຄອງໃບຢັ້ງຢືນແຫລ່ງກຳເນີດສິນຄ້າທີ່ໄດ້ສິດພິເສດນັບແຕ່ວັນທີ 1 ຕຸລາ 2012 ເປັນຕົ້ນໄປ ດັ່ງນີ້:

1.1 ຟອມ ເອ (Certificate of Origin Form A) ທີ່ອອກໃຫ້ແກ່ສິນຄ້າມີແຫຼ່ງກຳເນີດ ໂດຍການນຳໃຊ້ວັດຖຸດິບພາຍໃນປະເທດທັງໝົດ ເຂົ້າໃນຂະບວນການຜະລິດ ແລະ ປຸງແຕ່ງ ທີ່ໄດ້ລະບຸໄວ້ຢູ່ໃນຂໍ້ 1 ມາດຕາ 7 ຂອງດຳລັດເລກທີ 228/ນຍ ລົງວັນທີ 22 ເມສາ 2010.

1.2 ຟອມ DFTP (Certificate of Origin Form DFTP) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີນຳເຂົ້າ ທີ່ປະເທດອິນເດຍ ໃຫ້ແກ່ ສປປ ລາວ ແບບຝ່າຍດຽວ;

1.3 ຟອມ ເອສ (Certificate of Origin Form S) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີນຳເຂົ້າພາຍໃຕ້ສັນຍາແບບທະວິພາຄີລະຫວ່າງສປປ ລາວ ກັບ ສສ ຫວຽດນາມ;

1.4 ຟອມ ດີ (Certificate of Origin Form D) ອອກໃຫ້ແກ່ສິນຄ້າທີ່ໄດ້ສິດພິເສດທາງດ້ານພາສີນຳເຂົ້າພາຍໃຕ້ເຂດການຄ້າເສລີອາຊຽນ;